## ການກວດເບິ່ງການກວດກັ່ນກອງ

**ພະຍາດ Amino acid**

- *argininosuccinic acidemia (ASA)*
- *citrullinemia*
- *Homocystinuria*
- *Maple syrup urine disease (MSUD)*
- *Phenylketonuria (PKU)*
- *tyrosinemia type 1*

**ພະຍາດ Fatty acid**

- *carnitine uptake deficiency (CUD)*
- *long-chain L-3-hydroxy acyl-CoA dehydrogenase (LCHAD) deficiency*
- *medium-chain acyl-CoA dehydrogenase (MCAD) deficiency*
- *trifunctional protein (TFP) deficiency*
- *very-long chain acyl-CoA dehydrogenase (VLCAD) deficiency*

**ພະຍາດ Organic acid**

- *3-hydroxy-3-methylglutaric aciduria (HMG)*
- *beta-ketothiolase deficiency (BKT)*
- *glutaric acidemia type 1 (GA-I)*
- *isovaleric acidemia (IVA)*
- *methylmalonic acidemias (CblA,B and MUT)*
- *multiple carboxylase deficiency (MCD)*
- *propionic acidemia (PROP)*

**ພະຍາດອື່ນໆ**

- *Biotinidase deficiency*
- *Congenital adrenal hyperplasia (CAH)*
- *Congenital hypothyroidism*
- *Cystic fibrosis (CF)*
- *Galactosemia*
- *Hemoglobinopathies (lvmtzg sickle cell disease)*

## ລູກຂອງຂ້ອຍສາມາດຖືກກວດກັ່ນເບິ່ງພະຍາດແນວອື່ນໄດ້ບໍ່?

ແມ່ນ.ການກວດພົບການເສັຽຫູຟັງສຽງຂັ້ນເລີ້ມຕົ້ນສາມາດນຳພາໄປສູ່ຄວາມຊຳນານດານການປາກເວົ້າ ແລະ ພາສາເວົ້າທີ່ດີກວ່າເກົ່າ. ໂຮງພະຍາບານຄອດລູກທຸກໆບ່ອນຈະສະເນີການກວດກັ່ນກອງອັນນີ້ໃຫ້.

ເພີ້ມເຕີມອີກ, ມັນມີພະຍາດທີ່ໜ້ອຍທີ່ສຸດແນວອື່ນຊຶ່ງສາມາດຖືກກວດພົບໄດ້ໃນຣະຍະເວລາເກີດໃໝ່. ເພື່ອຣາຍລະອຽດເພີ້ມເຕີມ, ຈົ່ງເວົ້າລົມນຳຜູ້ໃຫ້ການປິ່ນປົວສຸຂະພາບລູກນ້ອຍຂອງທ່ານ.

## ການປະຕິບັດປົກປິດເປັນຄວາມລັບ

ກົມອະນາມັຍໄດ້ຖືກບັ່ງໂດຍກົດໝາຍໃຫ້ປົກປ້ອງຄວາມລັບສ່ວນຕົວຂອງເດັກນ້ອຍເກີດໃໝ່ ແລະ ຄອບຄົວຂອງເຂົາເຈົ້າຊຶ່ງວ່າຕົວຢ່າງຂອງຮ່າງກາຍ/ຣາຍລະອຽດທຸກໆຢ່າງທີ່ຖືກສົ່ງເຂົ້າມາສຳລັບການກວດກັ່ນເບິ່ງໄດ້ຖືກປົກປ້ອງຈາກການໃຊ້ ຫລື ການເຂົ້າເຖິງທີ່ບໍ່ເໝາະສົມ. ສລູບຄວາມຫຍໍ້ໆຂອງກົດຣະບຽບຂອງກົດໝາຍໄດ້ຖືກບອກກ່າວຢູ່ຂ້າງລຸ່ມນີ້. ກົດຣະບຽບອັນເຈາະຈົງໄດ້ຖືກອະທິບາຍຢູ່ໃນພາກສ່ວນ Section 246-650-050 WAC ໃບອັດສຳເນົາກໍ່ມີໄວ້ໃຫ້ຕາມຄຳຮ້ອງຂໍ ຫລື ຢູ່ໃນແວບໄຊທ໌ຂອງພວກເຮົາທີ່ www.doh.wa.gov/nbs.

ໃບຟອມກວດກັ່ນເບິ່ງຕົວຢ່າງຂອງຮ່າງກາຍຂອງເດັກນ້ອຍເກີດໃໝ່ໄດ້ຖືກເກັບຮັກສາໄວ້ຢູ່ໃນສາງເກັບເຄື່ອງທີ່ເຝົ້າຮັກສາຢູ່ຫ້ອງວິຈັຍຂອງກົມອະນາມັຍຂອງຣັດເປັນເວລາ 21 ປີ ໂດຍອີງຕາມມາຕຣາ Chapter 70.41.4190 RCW. ຫລັງຈາກເວລານັ້ນແລ້ວ, ຕົວຢ່າງຈະຖືກທຳລາຍ. ກົມອະນາມັຍຈະທຳລາຍຕົວຢ່າງກ່ອນເວລາ 21 ປີເມື່ອໄດ້ຮັບຄຳຮ້ອງຂໍທາງໜັງສືຈາກພໍ່ແມ່ ຫລື ຜູ້ປົກຄອງ ແລະ ຫລັງຈາກທີ່ການກວດເບິ່ງທີ່ຕ້ອງໄດ້ເຮັດທຸກໆຢ່າງໄດ້ຖືກເຮັດລົງໄປແລ້ວ.

ການເຂົ້າເຖິງໃບຟອມຂອງການກວດກັ່ນເບິ່ງຕົວຢ່າງຂອງເດັກເກີດໃໝ່ໄດ້ຖືກຈຳກັດໃຫ້ແຕ່ພະນັກງານຂອງກົມອະນາມັຍ ແລະບຸກຄົນຜູ້ທີ່ຖືກອະນຸຍາດຜູ້ທີ່ເຫັນພ້ອມນຳທີ່ຈະປະຕິບັດຕາມຢ່າງເຂ່ງຂັດໃນກົດຣະບຽບຂອງການປົກປິດໄວ້ເປັນຄວາມລັບ. ໃບໜັງສືຕົກລົງເຫັນພ້ອມຂອງພໍ່ແມ່ຕ້ອງໄດ້ມີສຳລັບການຄົ້ນຄົ້ວທຸກໆຢ່າງທີ່ກ່ຽວຂ້ອງນຳຣາຍລະອຽດທີ່ຊີ້ບອກບຸກຄົນໄດ້ ແລະ ສຳລັບຈຸດປະສົງຢ່າງອື່ນສ່ວນຫລາຍ. ການເປີດເຜີຍຕົວຢ່າງ ຫລື ຣາຍລະອຽດແນວອື່ນທຸກໆຢ່າງຕ້ອງສອດຄ່ອງນຳກົດຣະບຽບ State's Uniform Health Information Act (Chapter 70.02 RCW) ແລະ ເງື່ອນໄຂຂອງການປົກປິດເປັນຄວາມລັບ ແລະ ຄວາມປອດພັຍຂອງ Chapter 246-650 Newborn Screening.

---

ຈະມີການເກັບເງິນເທື່ອດຽວເທົ່ານັ້ນຕໍ່ເດັກທາຣົກຄົນນຶ່ງສຳລັບການກວດກັ່ນພະຍາດ. ເລືອດເພີ້ມເຕີມຈະຖືກກວດເບິ່ງໂດຍບໍ່ເກັບເງິນເພີ້ມເຕີມ. ເຖິງຢ່າງໃດກໍ່ຕາມ, ຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານອາດຈະເກັບເອົາຄ່າທຳນຽມເພື່ອຈະດູດເອົາເລືອດ. ການກວດວິຈັຍ, ຖ້າຕ້ອງການ, ຈະກໍ່ໃຫ້ມີຄ່າທຳນຽມເພີ້ມເຕີມ.

---

ປື້ມຄູ່ມືຫົວນີ້ມີໄວ້ໃຫ້ເປັນພາສາ:ຂະເມັນ, ຈີນ, ເກົາຫລີ, ລາວ, ຣັດເຊັຽ, ໂຊມາລີ, ສະແປນິຊ, ແລະ ວຽດນາມ. ສຳລັບບຸກຄົນທີ່ມີຄວາມເສັຽອົງຄະ, ປື້ມຄູ່ມືຫົວນີ້ຈະມີໄວ້ໃຫ້ໃນແບບອື່ນຕາມຄຳຮ້ອງຂໍ. ເພື່ອຈະຍື່ນຂໍເອົາກະຣຸນາໂທຣະສັບໄປທີ່ 1-866-660-9050.

# ການກວດກັ່ນພະຍາດເດັກເກີດໃໝ່ ແລະ ລູກນ້ອຍຂອງທ່ານ




Newborn Screening Program
P.O. Box 55279
1610 NE 150th Street
Shoreline, WA 98155-0729
ໂທຣະສັບ: (206) 361-2902
1-866-660-9050
FAX: (206) 361-4996
Email: NBS.Prog@doh.wa.gov
ອິນເຕີແນດ: www.doh.wa.gov/nbs


Washington State Department of Health

DOH 304-007 July 2008 Laotian

## ການກວດກັ່ນພະຍາດເດັກນ້ອຍເກີດໃໝ່ແມ່ນຫຍັງ?

ການກວດກັ່ນພະຍາດເດັກນ້ອຍເກີດໃໝ່ແມ່ນຫົນທາງນຶ່ງເພື່ອຈະຊີ້ບອກເດັກນ້ອຍຜູ້ທີ່ຕົກຢູ່ໃນອັນຕຣາຍສຳລັບພະຍາດຮ້າຍແຮງທີ່ສາມາດຖືກປົວໃຫ້ຫາຍໄດ້, ແຕ່ວ່າບໍ່ປະກົດໃຫ້ເຫັນໃນເວລາເກີດ. ກົດໝາຍຂອງຣັດບັ່ງໃຫ້ເດັກນ້ອຍທຸກໆຄົນທີ່ເກີດຢູ່ໃນຣັດວໍຊິງຕັນຖືກກວດກັ່ນເບິ່ງພະຍາດບາງຢ່າງກ່ອນທີ່ເຂົາເຈົ້າຈະຖືກປ່ອຍຕົວອອກຈາກໂຮງພະຍາບານ (ມາຕຣາ70.83 RCW). ເຖິງແມ່ນວ່າກົດໝາຍຈະກ່ຽວກັບເດັກນ້ອຍເກີດຢູ່ໃນໂຮງພະຍາບານ, ມັນສຳຄັນວ່າເດັກນ້ອຍເກີດຢູ່ນອກໂຮງພະຍາບານຈະໄດ້ຮັບການປິ່ນປົວທີ່ມີຄຸນນະພາບຢ່າງດຽວກັນ.

## ເປັນຫຍັງການກວດກັ່ນກອງຈຶ່ງສຳຄັນ?

ການກວດກັ່ນກອງອັນນີ້ຈະຊີ້ບອກພະຍາດຊຶ່ງ, ຖ້າຫາກວ່າບໍ່ຖືກພົບເຫັນ ແລະ ປິ່ນປົວໃນຂັ້ນເລີ້ມຕົ້ນ, ສາມາດເປັນຜົນເຖິງສມອງຊັກຊ້າ, ການເຈັບປ່ວຍຮ້າຍແຮງ ຫລື ແມ້ແຕ່ການເສັຽຊີວິດ. ເດັກນ້ອຍເກີດໃໝ່ອາດຈະເບິ່ງວ່າແຂງແຮງໝົດທຸກຢ່າງແຕ່ວ່າຍັງມີພະຍາດຮ້າຍແຮງ. ການພົບເຫັນບັນຫາເຫລົ່ານີ້ໃນຂັ້ນທຳອິດ ແລະ ການປິ່ນປົວມັນສາມາດຫລີກເວັ້ນການສັບສົນຮ້າຍແຮງຫລາຍຢ່າງ. ແຕ່ວ່າໂຊກດີ, ການປິ່ນປົວແມ່ນມີຢູ່ເພື່ອຈະປ້ອງກັນ ຫລື ລຸດຜ່ອນຢ່າງຫລວງຫລາຍໃນຜົນສະທ້ອນຂອງພະຍາດເຫລົ່ານີ້.

ການກວດກັ່ນພະຍາດຂອງເດັກເກີດໃໝ່ແມ່ນຫົນທາງສຳຄັນອັນນຶ່ງເພື່ອຈະເອົາການປິ່ນປົວສຸຂະພາບທີ່ດີທີ່ສຸດອາດຈະເປັນໄປໄດ້ໃຫ້ແກ່ລູກນ້ອຍຂອງທ່ານ. ການກວດເບິ່ງເລືອດອັນງ່າຍໆສາມາດເອົາຣາຍລະອຽດໃຫ້ທ່ານແລະ ຜູ້ໃຫ້ການປິ່ນປົວລູກນ້ອຍຂອງທ່ານກ່ຽວກັບສຸຂະພາບຂອງລູກນ້ອຍຂອງທ່ານຊຶ່ງຖ້າບໍ່ກວດທ່ານຈະບໍ່ຮູ້.

## ພະຍາດໃດແດ່ຈະຖືກພົບພໍ?

ໃນປີ 2008, ໂຄງການກວດກັ່ນກອງຈະຂະຍາຍອອກ ແລະ ເດັກນ້ອຍຈະຖືກກວດເບິ່ງສຳລັບພະຍາດເພີ້ມເຕີມອີກ 15 ຢ່າງ. ສຳລັບລາຍຊື່ອັນຄົບຖ້ວນຂອງສະພາບການ, ກະຣຸນາເບິ່ງຂ້າງຫລັງຂອງປຶ້ມຄູ່ມືຫົວນີ້.

## ການກວດກັ່ນກອງຈະຈະຖືກເຮັດຢ່າງໃດ?

ການກວດທຸກໆຢ່າງຈະຖືກເຮັດຈາກຢອດເລືອດບໍ່ພໍເທົ່າໃດຢອດຈາກສົ້ນນ່ອງຂອງລູກນ້ອຍຂອງທ່ານ. ເລືອດຈະຖືກເກັບເອົາໃສ່ເຈັ້ຽຊຶມພິເສດ ແລະ ຈະຖືກສົ່ງໄປຫາຫ້ອງການວິຈັຍ State Public Health Newborn Screening Laboratory ຢູ່ເມືອງ Shorelin ເພື່ອຈະກວດເບິ່ງ. ໂຮງພະຍາບານ ຫລື ຜູ້ໃຫ້ການປິ່ນປົວສຸຂະພາບບ່ອນທີ່ສົ່ງເລືອດເຂົ້າມາຈະຖືກແຈ້ງບອກເຖິງຜົນອອກມາພາຍໃນບໍ່ພໍເທົ່າໃດວັນ.



## ເປັນຫຍັງການກວດກັ່ນກອງຄວນຈະຖືກເຮັດ?

ກົດໝາຍບັ່ງໃວ້ວ່າເລືອດເທື່ອທຳອິດຈະຖືກເກັບເອົາກ່ອນການປ່ອຍຕົວອອກຈາກໂຮງພະຍາບານ, ແຕ່ວ່າບໍ່ກາຍເກີນອາຍຸ 5 ວັນ. ອັນນີ້ຈະເຮັດໃຫ້ເດັກທາຣົກທີ່ເປັນພະຍາດຈະຖືກປິ່ນປົວໂດຍໄວເທົ່າທີ່ຈະໄວໄດ້. ເລືອດເທື່ອທີສອງຄວນຈະຖືກເກັບເອົາໃນຣະຫວ່າງອາຍຸ 7 ແລະ 14 ວັນ, ແຕ່ວ່າຍັງຈະເປັນຜົນດີຢູ່ສຳລັບເດັກທາຣົກອາຍຸຫລາຍກວ່າ. ການກວດເພີ້ມເຕີມຍັງຄວນຈະຖືກເຮັດເມື່ອເວລາຖືກຂໍໃຫ້ເຮັດໂດຍທ່ານໝໍປິ່ນປົວສຸຂະພາບຂອງເດັກນ້ອຍຂອງທ່ານ.



## ເປັນຫຍັງເລືອດສອງເທື່ອຈະຖືກແນະນຳໃຫ້ເອົາ?

ພະຍາດສ່ວນຫລາຍຈະຖືກຄົ້ນພົບເຫັນຢູ່ໃນເລືອດເທື່ອທຳອິດ, ເຖິງແມ່ນວ່າຈະຖືກເກັບເອົາໃນວັນເກີດກໍ່ຕາມ. ເລືອດເທື່ອທີ ສອງ ແມ່ນຖືກແນະນຳໃຫ້ເຮັດຍ້ອນວ່າພະຍາດບາງຢ່າງອາດຈະບໍ່ຖືກພົບພໍ້ຈົນກວ່າວ່າເດັກນ້ອຍຈະມີອາຍຸຫລາຍວັນກວ່າ. ບາງເທື່ອຕ້ອງໄດ້ເອົາເລືອດຫລາຍກວ່າສອງເທື່ອ. ອັນນີ້ບໍ່ໄດ້ໝາຍຄວາມວ່າລູກຂອງທ່ານມີພະຍາດແນວນຶ່ງຂອງພະຍາດເຫລົ່ານີ້. ເຫດຜົນທົ່ວໄປສ່ວນຫລາຍສຳລັບການຂໍເອົາເລືອດເພີ້ມເຕີມແມ່ນວ່າຜົນອອກມາຂອງເທື່ອກ່ອນແມ່ນລົງຄວາມເຫັນບໍ່ໄດ້.

## ຈະມີຫຍັງເກີດຂຶ້ນຖ້າຫາກວ່າພະຍາດໄດ້ຖືກສົງສັຍ?

ຖ້າຫາກວ່າການກວດກັ່ນພະຍາດຂອງເດັກເກີດໃໝ່ຊີ້ບອກບັນຫາທີ່ອາດຈະເປັນໄປໄດ້, ຜູ້ໃຫ້ການປິ່ນປົວສຸຂະພາບຂອງລູກນ້ອຍຂອງທ່ານຈະຖືກຕິດຕໍ່ໄປຫາໂດຍທັນທີໂລດ. ການກວດເບິ່ງພະຍາດຈະຖືກແນະນຳບອກເພື່ອວ່າການປິ່ນປົວສາມາດຖືກເລີ້ມຕົ້ນໂດຍປາສຈາກການຊັກຊ້າຖ້າຫາກວ່າລູກນ້ອຍຂອງທ່ານໄດ້ຕິດແນວນຶ່ງຂອງພະຍາດເຫລົ່ານີ້.

## ຂ້ອຍຈະຮູ້ຈັກຜົນກວດອອກມາໄດ້ຢ່າງໃດ?

ຖ້າຫາກວ່າທ່ານມີຄຳຖາມແນວໃດກ່ຽວກັບຜົນອອກມາຈາກການກວດກັ່ນພະຍາດລູກນ້ອຍຂອງທ່ານ, ກະຣຸນາຕິດຕໍ່ໄປຫາຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານ, ຖ້າຫາກວ່າຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານບໍ່ມີຜົນຂອງການກວດກັ່ນພະຍາດ, ເຂົາເຈົ້າຄວນຈະຕິດຕໍ່ໄປຫາໂຄງການ Newborn Screening Program ເພື່ອຈະຂໍເອົາໂກປີໃບນຶ່ງ.

## ໃນຖານະເປັນພໍ່ແມ່,ຂ້ອຍຈະປະຕິເສດບໍ່ໃຫ້ເຮັດການກວດກັ່ນກອງເດັກນ້ອຍເກີດໃຫມ່ໄດ້ບໍ່?

ກົດໝາຍເອົາສິດທິໃຫ້ພໍ່ແມ່ທີ່ຈະປະຕິເສດການກວດກັ່ນສຳລັບລູກນ້ອຍຂອງເຂົາເຈົ້າຖ້າຫາກວ່າການກວດກັ່ນພະຍາດອັນນີ້ຈະຂັດຕໍ່ຄວາມເຊື່ອຖື ຫລື ພາກປະຕິບັດທາງສາສນາຂອງເຂົາເຈົ້າ. ຖ້າຫາກວ່າອັນນີ້ແມ່ນຄວາມຈິງສຳລັບທ່ານ, ໃຫ້ແນ່ໃຈວ່າໄດ້ບອກພະນັກງານຂອງໂຮງພະຍາບານ ຫລື ຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານ.

## ຂ້າພະເຈົ້າຈະເອົາຣາຍລະອຽດເພີ້ມເຕີມກ່ຽວກັບການກວດກັ່ນພະຍາດເດັກນ້ອຍເກີດໃໝ່ໄດ້ຢູ່ໃສ?

ເພື່ອຣາຍລະອຽດເພີ້ມເຕີມ,ຈົ່ງເວົ້າລົມນຳຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານຫລືຕິດຕໍ່ໄປຫາໂຄງການກວດກັ່ນກອງເດັກນ້ອຍເກີດໃຫມ່ໂດຍການໃຊ້ຣາຍລະອຽດທີ່ຖືກເອົາໃຫ້ຢູ່ທາງຫນ້າຂອງປື້ມຄູ່ມືຫົວນີ້.